ຄະນະກຳມະການຄຸ້ມຄອງຫຼັກຊັບ
Lao Securities Commission

# Annual Report
# ບົດລາຍງານປະຈຳປີ

# 2017

ຄະນະກຳມະການຄຸ້ມຄອງຫຼັກຊັບ
Lao Securities Commission

## ວິໄສທັດຮອດປີ 2030:

“ເປັນຂໍກຸນແຈ ໃນການຈັດສັນແຫຼ່ງທຶນ ທີ່ມີຄວາມໜ້າເຊື່ອຖື ແລະ ມີມາດຕະຖານສາກົນ”

# ສາລະບານ


**ພາກສະເໜີ** ..... 1

**ຄະນະກຳມະການຄຸ້ມຄອງຫຼັກຊັບ** ..... 2

**ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ** ..... 4

**ສະຖິຕິ ປະຈຳປີ 2017** ..... 5

**I. ການພັດທະນາວຽກງານຫຼັກຊັບໃນປີ 2017** ..... 6

1. ດ້ານນິຕິກຳ ..... 6
2. ການອອກຈຳໜ່າຍຫຼັກຊັບໃນຕະຫຼາດຂັ້ນໜຶ່ງ ..... 6
3. ການຄຸ້ມຄອງການເຄື່ອນໄຫວໃນຕະຫຼາດຂັ້ນສອງ ..... 8
4. ການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ ..... 9
5. ການໂຄສະນາເຜີຍແຜ່ ..... 9
6. ການພົວພັນຮ່ວມມືສາກົນ ..... 10

**II. ທິດທາງແຜນການ ປີ 2018** ..... 11

**ຂໍ້ມູນຕິດຕໍ່** ..... 13

# ຕາຕະລາງແຜນວາດ

ແຜນວາດ 1 : ໂຄງຮ່າງການຈັດຕັ້ງຂອງ ຄະນະກໍາມະການຄຸ້ມຄອງຫຼັກຊັບ....................................................3
ແຜນວາດ 2 : ໂຄງຮ່າງການຈັດຕັ້ງຂອງສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ........................................4
ແຜນວາດ 3 : ສະພາບການຊື້-ຂາຍຮຸ້ນຂອງ ຕລຊລ (LSX).......................................................................8
ແຜນວາດ 4 : ມູນຄ່າ ແລະ ປະລິມານການຊື້-ຂາຍ ...............................................................................9
ແຜນວາດ 5 : ອັດຕາສ່ວນການຊື້-ຂາຍ ໂດຍນັກລົງທຶນຕ່າງປະເທດ ແລະ ພາຍໃນ ນັບແຕ່ມື້ສ້າງຕັ້ງຈົນຮອດປີ 2017 ...9

## ຕາຕະລາງ ແລະ ຮູບພາບ

ຕາຕະລາງ 1: ນິຕິກຳທີ່ໄດ້ປັບປຸງ ແລະ ສ້າງໃໝ່ ໃນປີ 2017 ........ 6

ຕາຕະລາງ 2: ສະຖິຕິກ່ຽວກັບການອອກຈຳໜ່າຍຫຼັກຊັບ ແຕ່ປີ 2010-2017. ........ 7

ຮູບພາບທີ 1: ການເຜີຍແຜ່ວຽກງານຫຼັກຊັບໃຫ້ແກ່ຜູ້ມີສ່ວນຮ່ວມໃນວຽກງານຕະຫຼາດທຶນ ........ 10

ຮູບພາບທີ 2: ກອງປະຊຸມ (Working Committee – Capital Market Development) WC-CMD ... 10

# ພາກສະເໜີ

ເພື່ອຈັດຕັ້ງປະຕິບັດແຜນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ປະຈຳປີ 2017 ທີ່ຕິດພັນກັບຕະຫຼາດທຶນ ກໍຄືການຊຸກຍູ້ໃຫ້ຕະຫຼາດຫຼັກຊັບ ມີການເຄື່ອນໄຫວຢ່າງຕັ້ງໜ້າ ແລະ ມີປະສິດທິຜົນສູງ ສ້າງໃຫ້ເປັນແຫຼ່ງລະດົມທຶນໄລຍະຍາວໃຫ້ຫົວໜ່ວຍທຸລະກິດ ແລະ ລັດຖະບານໃນການດຸ່ນດ່ຽງງົບປະມານ, ຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ຜັນຂະຫຍາຍແຜນຍຸດທະສາດພັດທະນາຕະຫຼາດທຶນ ຂອງ ສປປ ລາວ (2016-2025) ມາເປັນແຜນການເຄື່ອນໄຫວ ທີ່ມີຈຸດສຸມ ແລະ ມີຄາດໝາຍສູ້ຊົນແຕ່ລະດ້ານຢ່າງລະອຽດ ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ແລະ ພັດທະນາຕະຫຼາດທຶນ ມີຜົນສຳເລັດ ແລະ ມີການຂະຫຍາຍຕົວຫຼາຍດ້ານເມື່ອທຽບໃສ່ປີຜ່ານມາ.

ປີ 2017 ເປັນປີທີ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ເລີ່ມຫັນເປັນທັນສະໄໝ ແລະ ໄດ້ເລີ່ມນຳໃຊ້ລະບົບເທັກໂນໂລຊີຂໍ້ມູນຂ່າວສານ ເຂົ້າມາຊ່ວຍໃນການຮັບສົ່ງບົດລາຍງານຂອງຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ໂດຍໄດ້ສຸມໃສ່ບໍລິສັດຈົດທະບຽນເປັນເປົ້າໝາຍບູລິມະສິດ. ພ້ອມກັນນັ້ນ ກໍ່ໄດ້ມີການສ້າງ ແລະ ປັບປຸງນິຕິກຳຈຳນວນໜຶ່ງ ເພື່ອອຳນວຍຄວາມສະດວກ ແລະ ຫຼຸດຕົ້ນທຶນໃນການຊື້-ຂາຍຫຼັກຊັບຂອງຜູ້ລົງທຶນ ແນໃສ່ສ້າງສະພາບຄ່ອງໃຫ້ແກ່ຕະຫຼາດຫຼັກຊັບລາວ; ດ້ານບໍລິສັດຈົດທະບຽນ ກໍ່ມີຈຳນວນເພີ່ມຂຶ້ນ ເຮັດໃຫ້ມີມູນຄ່າຕະຫຼາດເພີ່ມຂຶ້ນ ຈາກ 10.414 ຕື້ກີບ ມາເປັນ 11.374,2 ຕື້ກີບ ທຽບໃສ່ GDP ແມ່ນກວມເອົາ 8,08%; ຈຳນວນສະຖາບັນສື່ກາງ ແລະ ປະເພດການໃຫ້ບໍລິການທາງດ້ານຫຼັກຊັບ ລວມທັງ ຖານຜູ້ລົງທຶນ ກໍ່ມີການຂະຫຍາຍຕົວເພີ່ມຂຶ້ນ. ນອກນັ້ນ, ສຄຄຊ ຍັງໄດ້ສືບຕໍ່ເປີດກວ້າງການຮ່ວມມື ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ ດ້ວຍການຄົ້ນຄວ້າເຂົ້າເປັນສະມາຊິກ ຂອງອົງການຄຸ້ມຄອງຫຼັກຊັບສາກົນ ແລະ ຍົກສູງບົດບາດຂອງຕົນໃນເວທີສາກົນ ດ້ວຍການເປັນເຈົ້າພາບກອງປະຊຸມລະດັບຄະນະກຳມະການພັດທະນາຕະຫຼາດທຶນອາຊຽນ.

ການເຄື່ອນໄຫວວຽກງານຄຸ້ມຄອງ ແລະ ພັດທະນາຕະຫຼາດທຶນໃນປີ 2017 ທີ່ສ່ອງແສງອອກໃນບົດລາຍງານປະຈຳປີ ສະບັບນີ້ ຈະເປັນພື້ນຖານໃຫ້ແກ່ການກຳນົດທິດທາງ ແລະ ແຜນການເຄື່ອນໄຫວໃນການພັດທະນາຕະຫຼາດທຶນໃນປີ 2018 ຊຶ່ງຈະເປັນອີກປີໜຶ່ງທີ່ມີຄວາມທ້າທາຍ ໃນການຈັດຕັ້ງປະຕິບັດແຜນງານ-ໂຄງການໄລຍະ 5 ປີ (2016-2020) ໃຫ້ມີຜົນສຳເລັດຕາມລະດັບຄາດໝາຍ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ໃຫ້ມີການຂະຫຍາຍຕົວ ໄປຄຽງຄູ່ກັບການປະຕິບັດພັນທະທີ່ໃຫ້ໄວ້ກັບສາກົນໃຫ້ມີຄວາມຄືບໜ້າ.

ຄະນະກຳມະການຄຸ້ມຄອງຫຼັກຊັບ ຂຽນຫຍໍ້ດ້ວຍຕົວອັກສອນວ່າ: "ຄຄຊ" ແລະ ມີຊື່ເປັນພາສາອັງກິດວ່າ: "Lao Securities Commission" ຂຽນຫຍໍ້ດ້ວຍຕົວອັກສອນວ່າ: "LSC". ຄຄຊ ມີພາລະບົດບາດ ເປັນເສນາທິການໃຫ້ ລັດຖະບານ ໃນການຄຸ້ມຄອງມະຫາພາກທາງດ້ານວຽກງານຫຼັກຊັບ ຢ່າງລວມສູນ ໃນຂອບເຂດທົ່ວປະເທດ.

ສຄຄຊ ປະກອບດ້ວຍ 13 ທ່ານ ຄື: ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງການເງິນ ເປັນປະທານ; ຜູ້ວ່າການທະນາຄານແຫ່ງ ສປປ ລາວ (ທຫລ) ເປັນຮອງປະທານ ແລະ ຜູ້ປະຈຳການ; ແລະ ກຳມະການອີກ 10 ທ່ານ ຄື: ຮອງລັດຖະມົນຕີ ກະຊວງການເງິນ; ປະທານຄະນະກຳມະການປັບປຸງທຸລະກິດແຫ່ງຊາດ; ຮອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ; ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ; ຮອງລັດຖະມົນຕີ ກະຊວງຍຸຕິທຳ; ຮອງລັດຖະມົນຕີ ກະຊວງພາຍໃນ; ຮອງຜູ້ວ່າການ ທຫລ; ຮອງປະທານກຳມາທິການແຜນການ ການເງິນ ແລະ ການກວດສອບ, ສະພາແຫ່ງຊາດ; ຮອງປະທານກຳມະທິການ ເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ສະພາແຫ່ງຊາດ; ຫົວໜ້າອົງການໄອຍະການປະຊາຊົນສູງສຸດ; ຮອງລັດຖະມົນຕີ, ຮອງຫົວໜ້າ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ; ແລະ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນ ເລຂາ ສຄຄຊ (ແຜນວາດ 1).

ເພື່ອຄຸ້ມຄອງການເຄື່ອນໄຫວວຽກງານຫຼັກຊັບ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ, ສຄຄຊ ໄດ້ມີການປຶກສາຫາລື, ພິຈາລະນາ ແລະ ຕິດຕາມ ການເຄື່ອນໄຫວແຕ່ລະໜ້າວຽກກ່ຽວຂ້ອງຢ່າງໃກ້ຊິດ ໂດຍຜ່ານການພິຈາລະນາທາງດ້ານເອກະສານ ແລະ ຜ່ານການຈັດກອງປະຊຸມ. ໃນປີ 2017 ສຄຄຊ ໄດ້ຈັດກອງປະຊຸມຂຶ້ນທັງໝົດ 3 ຄັ້ງ ໂດຍໄດ້ພິຈາລະນາຫຼາຍບັນຫາສຳຄັນ ເປັນຕົ້ນແມ່ນ ການສ້າງບັນຊີລາຍຊື່ເປົ້າໝາຍບໍລິສັດຈົດທະບຽນ, ແຜນການເຄື່ອນໄຫວວຽກງານ ປະຈຳປີ 2018 ຂອງ ສສຄຄຊ, ການສ້າງສະພາບຄ່ອງໃນຕະຫຼາດຫຼັກຊັບລາວ (ຕລຊລ), ແລະ ການປັບປຸງກົດໝາຍວ່າດ້ວຍຫຼັກຊັບ ແລະ ສ້າງນິຕິກຳລຸ່ມກົດໝາຍ ຊຶ່ງໃນໄລຍະຜ່ານມາແມ່ນໄດ້ສຳເລັດຕາມແຜນການເປັນສ່ວນໃຫຍ່.

# ແຜນວາດ 1 : ໂຄງຮ່າງການຈັດຕັ້ງຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ



ທ່ານ ສົມດີ ດວງດີ,
ຮອງນາຍົກລັດຖະມົນ,ລັດຖະມົນ
ຕີກະຊວງ ການເງິນ, ປະທານ ຄຄຊ



ທ່ານ ປອ. ສົມພາວ ໄຟສິດ,
ຜູ້ວ່າ ການທະນາຄານແຫ່ງ ສປປ ລາວ,
ຮອງປະທານ ຄຄຊ, ຜູ້ປະຈຳການ



ທ່ານ ປອ. ອາດສະພັງທອງ ສີພັນດອນ,
ຮອງລັດຖະມົນຕີ ກະຊວງການເງິນ,
ກຳມະການ ຄຄຊ



ທ່ານ ສົມຈິດ ອິນທະມິດ,
ຮອງລັດຖະມົນຕີ ກະຊວງອຸດສາຫະ
ກຳ ແລະ ການຄ້າ, ກຳມະການ ຄຄຊ



ທ່ານ ປອ. ຄຳລຽນ ພົນເສນາ,
ຮອງລັດຖະມົນຕີ ກະຊວງ ແຜນການ
ແລະ ການລົງທຶນ, ກຳມະການ ຄຄຊ



ທ່ານ ບຸນສະຫວາດ ບຸບຜາ,
ຮອງລັດຖະມົນຕີ ກະຊວງຍຸຕິທຳ,
ກຳມະການ ຄຄຊ



ທ່ານ ຄຳມູນ ວິພົງໄຊ,
ຮອງລັດຖະມົນຕີ ກະຊວງພາຍໃນ,
ກຳມະການ ຄຄຊ



ທ່ານ ສອນໄຊ ສິດພະໄຊ,
ຮອງຜູ້ວ່າການ ທະນາຄານແຫ່ງ ສປປ
ລາວ, ກຳມະການ ຄຄຊ.



ທ່ານ ທັນຕາ ກອງຜາລີ,
ຮອງກຳມະທິການແຜນການ, ການເງິນ
ແລະ ການກວດສອບ, ສະພາແຫ່ງ
ຊາດ, ກຳມະການ ຄຄຊ



ທ່ານ ມະນີໂສ ຊາມຸນຕີ,
ຮອງປະທານກຳມາທິການ ເສດຖະ
ກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ
ສະພາແຫ່ງຊາດ, ກຳມະການ ຄຄຊ



ທ່ານ ໄຊຊະນະ ໂຄດພູທອນ,
ຮອງຫົວໜ້າອົງການໄອຍະການປະຊາ
ຊົນ ສູງສຸດ, ກຳມະການ ຄຄຊ



ທ່ານ ສົມສະນິດ ສຸວັນນະລາດ, ຮອງ
ລັດຖະມົນຕີ, ຮອງຫົວໜ້າ ຫ້ອງ
ວ່າການສຳນັກງານ
ນາຍົກລັດຖະມົນຕີ, ກຳມະການ ຄຄຊ



ທ່ານ ນາງ ສາຍສະໝອນ ຈັນທະຈັກ,
ຫົວໜ້າສຳນັກງານ ຄຄຊ, ເລຂາ ຄຄຊ

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຂຽນຫຍໍ້ດ້ວຍຕົວອັກສອນວ່າ: "ສຄຄຊ" ແລະ ມີຊື່ເປັນພາສາອັງກິດວ່າ: "Lao Securities Commission Office" ຊຶ່ງຂຽນຫຍໍ້ດ້ວຍຕົວອັກສອນວ່າ: "LSCO" ຢູ່ພາຍໃຕ້ການຊີ້ນຳ-ນຳພາໂດຍກົງທາງດ້ານວິຊາສະເພາະ ຈາກຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ໄດ້ຮັບງົບປະມານຈາກ ທຫລ. ມີພາລະບົດບາດເປັນກົງຈັກຊ່ວຍວຽກໃຫ້ແກ່ ຄຄຊ ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຫຼັກຊັບ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານດັ່ງກ່າວ ມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ສອດຄ່ອງຕາມແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງລັດຖະບານໃນແຕ່ລະໄລຍະ.

ປີ 2017 ສສຄຄຊ ປະກອບມີພະນັກງານທັງໝົດ 50 ຄົນ (ຍິງ 23 ຄົນ) ໃນນັ້ນ ມີຄະນະ ສສຄຄຊ 03 ຄົນ (ຍິງ 02 ຄົນ), ຄະນະພະແນກ 12 ຄົນ (ຍິງ 05 ຄົນ) ແລະ ວິຊາການ 35 ຄົນ (ຍິງ 16 ຄົນ). ມີລະດັບການສຶກສາປະລິນຍາເອກ 01 ຄົນ, ປະລິນຍາໂທ 26 ຄົນ (ຍິງ 13 ຄົນ), ປະລິນຍາຕີ 22 ຄົນ (ຍິງ 10 ຄົນ) ແລະ ຊັ້ນກາງ 01 ຄົນ.

ສຄຄຊ ປະກອບດ້ວຍ 6 ພະແນກ ຄື: ພະແນກຈັດຕັ້ງ ແລະ ບໍລິຫານ, ພະແນກຄຸ້ມຄອງການອອກຈຳໜ່າຍຫຼັກຊັບ, ພະແນກຄຸ້ມຄອງສະຖາບັນສີ່ກາງດ້ານຫຼັກຊັບ, ພະແນກນິຕິກຳ, ພະແນກຝຶກອົບຮົມ ແລະ ໂຄສະນາເຜີຍແຜ່ ແລະ ພະແນກຄຸ້ມຄອງຕະຫຼາດຫຼັກຊັບ (ແຜນວາດ 2).

**ແຜນວາດ 2: ໂຄງຮ່າງການຈັດຕັ້ງຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ**



## *ສະຖິຕິສຳຄັນຮອດ 2017*



ນິຕິກຳ **48 ສະບັບ**

ມີ: ກົດໝາຍ 1 ສະບັບ, ດຳລັດ 2 ສະບັບ, ຂໍ້ຕົກລົງ 16 ສະບັບ, ລະບຽບ 18 ສະບັບ, ຄຳແນະນຳ 4 ສະບັບ, ຄູ່ມື 1 ສະບັບ ແລະ ແຈ້ງການ 6 ສະບັບ



ບໍລິສັດຫຼັກຊັບ

**4 ແຫ່ງ**



ຜູ້ລົງທຶນ

**13.176 ຄົນ**

ພາຍໃນ 10.491 ຄົນ ແລະ ຕ່າງປະເທດ 2.685 ຄົນ



ນັກວິຊາຊີບທຸລະກິດຫຼັກຊັບ ທັງໝົດ **19 ຄົນ**, ໃນນັ້ນ ມີທີ່ປຶກສາດ້ານການເງິນ **3 ຄົນ** ແລະ ນາຍໜ້າຊື້-ຂາຍຫຼັກຊັບ **16 ຄົນ**



ບໍລິສັດກວດສອບ **4 ແຫ່ງ**

ບໍລິສັດປະເມີນມູນຄ່າຊັບສິນ **3 ແຫ່ງ**

ທະນາຄານດູແລຊັບສິນ **1 ແຫ່ງ**

ບໍລິສັດຈັດລະດັບຄວາມໜ້າເຊື່ອຖື **1 ແຫ່ງ**




ບໍລິສັດຈົດທະບຽນ **6 ແຫ່ງ**

ລະດົມທຶນໄດ້ທັງໝົດ **12.102,05 ຕື້ກີບ** (ພາຍໃນ 6.418,65 ຕື້ກີບ ແລະ ຕ່າງປະເທດ 5.683,40 ຕື້ກີບ)

ສະເພາະປີ 2017 ລະດົມໄດ້ **1.958 ຕື້ກີບ** ສຳລັບ 03 ບໍລິສັດ



ມູນຄ່າການຊື້-ຂາຍ ຕັ້ງແຕ່ປີ 2011-ປະຈຸບັນ ແມ່ນ **1.427,7 ລ້ານກີບ**

ສະເພາະປີ 2017 ແມ່ນ **343,7 ລ້ານກີບ**

## *I. ການພັດທະນາວຽກງານຫຼັກຊັບໃນປີ 2017*

### 1. ດ້ານນິຕິກຳ

**ຕາຕະລາງ 1: ນິຕິກຳທີ່ໄດ້ປັບປຸງ ແລະ ສ້າງໃໝ່ ໃນປີ 2017**

| *ລຳດັບ* | *ເນື້ອໃນ* | *ການສ້າງ/ປັບປຸງ* |
|---|---|---|
| *1* | ດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ | *ປັບປຸງ* |
| *2* | ຂໍ້ຕົກລົງວ່າດ້ວຍ ລະບົບເຕັກໂນໂລຊີການສື່ສານ ຂໍ້ມູນຂ່າວສານຂອງ ບໍລິສັດຫຼັກຊັບ | *ປັບປຸງ* |
| *3* | ຂໍ້ຕົກລົງວ່າດ້ວຍ ການບັນຊີ ແລະ ການກວດສອບ ວຽກງານຫຼັກຊັບ | *ປັບປຸງ* |
| *4* | ຂໍ້ຕົກລົງວ່າດ້ວຍ ການກຳນົດຄ່າທຳນຽມກ່ຽວກັບການຊື້-ຂາຍຮຸ້ນ ແລະ ການໂອນຮຸ້ນຈົດທະບຽນໃນ ຕລຊລ | *ປັບປຸງ* |
| *5* | ຂໍ້ຕົກລົງວ່າດ້ວຍ ການຊື້ຮຸ້ນໂດຍບໍ່ວາງເງິນມັດຈຳລ່ວງໜ້າ | *ໃໝ່* |
| *6* | ແຈ້ງການເລື່ອງ ຕິດຕາມ, ກວດກາ ແລະ ຊອກຮູ້ ແຫຼ່ງທຶນທີ່ນຳມາຊື້ຮຸ້ນ ໃນຕະຫຼາດທຶນລາວ | *ໃໝ່* |
| *7* | ແຈ້ງການເລື່ອງ ການເຄື່ອນໄຫວວຽກງານຂອງບໍລິສັດຫຼັກຊັບ | *ໃໝ່* |

ເພື່ອເປັນບ່ອນອີງໃຫ້ແກ່ການເຄື່ອນໄຫວວຽກງານຫຼັກຊັບ, ສຄຄຊ ໄດ້ເອົາໃຈໃສ່ສ້າງ ແລະ ປັບປຸງນິຕິກຳໃຫ້ແທດເໝາະກັບສະພາບການພັດທະນາຂອງຕະຫຼາດທຶນໃນແຕ່ລະໄລຍະ ຊຶ່ງມາຮອດປີ 2017 ສາມາດສ້າງ ແລະ ປັບປຸງນິຕິກຳກ່ຽວ ຂ້ອງໄດ້ທັງໝົດຈຳນວນ 48 ສະບັບ. ສະເພາະປີ 2017 ແມ່ນໄດ້ສຳເລັດການສ້າງ ແລະ ປັບປຸງນິຕິກຳ 07 ສະບັບ ຊຶ່ງໃນນັ້ນ ໄດ້ປັບປຸງດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ໂດຍເນັ້ນໃສ່ການປັບປຸງໂຄງປະກອບບຸກຄະລາກອນ ສຄຄຊ ແລະ ເພີ່ມເນື້ອໃນການໃຫ້ສິດ ສຄຄຊ ໃນການບໍລິຫານງົບປະມານດ້ວຍຕົນເອງ ແນໃສ່ກະກຽມໃຫ້ແກ່ການຫັນເປັນເອກະລາດ ໂດຍຕິດພັນກັບບັນຫານີ້ ສສຄຄຊ ກໍ່ໄດ້ສ້າງນິຕິກຳຍ່ອຍຂຶ້ນ 3 ສະບັບ ເພື່ອຄຸ້ມຄອງການບໍລິຫານງົບປະມານ ທີ່ໃຊ້ສະເພາະພາຍໃນ. ສ່ວນນິຕິກຳ ທີ່ໄດ້ປັບປຸງ ແລະ ສ້າງຂຶ້ນອີກຈຳນວນໜຶ່ງ ແມ່ນແນໃສ່ເພີ່ມສະພາບຄ່ອງໃຫ້ຕະຫຼາດຫຼັກຊັບ, ປົກປ້ອງຜົນປະໂຫຍດຂອງຜູ້ລົງທຶນ ແລະ ປະກອບສ່ວນຕໍ່ວຽກງານສະກັດກັ້ນ ແລະ ຕ້ານການຟອກເງິນ ເປັນຕົ້ນແມ່ນ ການກຳນົດຄ່າທຳນຽມການຊື້-ຂາຍ ແລະ ໂອນຮຸ້ນ, ການຊື້ຮຸ້ນໂດຍບໍ່ວາງເງິນມັດຈຳລ່ວງໜ້າ ແລະ ການແຈ້ງ ການເຄື່ອນໄຫວຂອງບໍລິສັດຫຼັກຊັບ. ນອກນັ້ນ, ເພື່ອເຮັດໃຫ້ກົດໝາຍວ່າດ້ວຍຫຼັກຊັບ ມີຄວາມຄົບຖ້ວນ, ຈະແຈ້ງ, ຮັດກຸມ, ສອດຄ່ອງກັບກົດໝາຍອື່ນທີ່ກ່ຽວຂ້ອງ ທັງແທດເໝາະກັບສະພາບການຂະຫຍາຍຕົວຂອງວຽກງານຫຼັກຊັບ ແລະ ການເຊື່ອມໂຍງສາກົນ, ສຄຄຊ ຈຶ່ງໄດ້ເລີ່ມຄົ້ນຄວ້າປັບປຸງກົດໝາຍວ່າດ້ວຍຫຼັກຊັບສະບັບປະຈຸບັນ ຊຶ່ງຄາດວ່າ ຈະສຳເລັດ ແລະ ຜ່ານສະພາແຫ່ງຊາດໃນທ້າຍປີ 2019.

### 2. ການອອກຈຳໜ່າຍຫຼັກຊັບໃນຕະຫຼາດຂັ້ນໜຶ່ງ

ໃນປີ 2017, ການລະດົມທຶນຜ່ານຕະຫຼາດທຶນຂອງບໍລິສັດຈຳນວນໜຶ່ງ ໄດ້ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດຂອງປະເທດໄດ້ຫຼາຍພໍສົມຄວນ ໂດຍສະເພາະແມ່ນດ້ານຂະແໜງການພະລັງງານ ທີ່ເປັນໜຶ່ງໃນຂະແໜງການ ບູລິມະສິດທີ່ລັດຖະບານເອົາໃຈໃສ່ ພ້ອມນັ້ນ ກໍ່ຍັງມີຂະແໜງການທະນາຄານ ແລະ ການກໍ່ສ້າງ. ຊຶ່ງ

ໃນປີນີ້ ສຄຄຊ ໄດ້ອະນຸຍາດໃຫ້ບໍລິສັດ 03 ແຫ່ງ ອອກຈຳໜ່າຍຫຼັກຊັບ ຊຶ່ງລວມມີການອອກຮຸ້ນຄັ້ງທຳອິດ, ການອອກຮຸ້ນເພີ່ມ ແລະ ການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ເພື່ອລະດົມທຶນທັງພາຍໃນ ແລະ ຕ່າງປະເທດ ໄດ້ຈຳນວນທັງໝົດ 1,958.26 ຕື້ກີບ ບັນລຸໄດ້ 1.39% ທຽບໃສ່ GDP ປີ 2016.

**ຕາຕະລາງ 2: ສະຖິຕິກ່ຽວກັບການອອກຈຳໜ່າຍຫຼັກຊັບ ແຕ່ປີ 2010-2017.**

| | | | | | | | | (ຫົວໜ່ວຍ: ຕື້ກີບ) |
|---|---|---|---|---|---|---|---|---|
| ບໍລິສັດອອກຈຳໜ່າຍຫຼັກຊັບ | 2010 | 2012 | 2013 | 2014 | 2015 | 2016 | 2017 | ລວມ |
| | | | | *ພາຍໃນ* | | | | |
| BCEL | 305.39 | | | | | | 360.06 | ***665.45*** |
| EDL-GEN | 932 | 1,611.15 | | | 2,754 | | | ***5,297.15*** |
| LWPC | | | 40.35 | | | | | ***40.35*** |
| PTL | | | | 240 | | | | ***240*** |
| SVN | | | | | 77.50 | | | ***77.50*** |
| PCD | | | | | | | 98.20 | ***98.20*** |
| ລວມ (1) | 1,237.39 | 1,611.15 | 40.35 | 240 | 2,831.50 | | 458.26 | ***6,418.65*** |
| | | | | *ຕ່າງປະເທດ* | | | | |
| EDL-GEN | | | | 1,625 | | 2,558 | | ***4,183.40*** |
| NNG2 | | | | | | | 1,500 | ***1,500*** |
| ລວມ (2) | | | | 1,625 | | 2,558 | 1,500 | ***5,683.40*** |
| ລວມ(1)+(2) | 1,237.39 | 1,611.15 | 40.35 | 1,865 | 2,831.50 | 2,558.40 | 1,958.26 | ***12,102.05*** |
| ທຽບໃສ່ GDP ໃນປີ | 2.19% | 2.22% | 0.05% | 1.75% | 2.41% | 1.98% | 1.39% | ***8.60%*** *(ທຽບໃສ່ GDP ຂອງປີ 2017)* |

ໃນປີນີ້, ການເຄື່ອນໄຫວລົງເກັບກຳຂໍ້ມູນບັນດາບໍລິສັດເປົ້າໝາຍອອກຈຳໜ່າຍຫຼັກຊັບ ແລະ ຈົດທະບຽນໃນ ຕລຊລ ຂອງຄະນະຮັບຜິດຊອບສະເພາະກິດ ຖືວ່າມີຄວາມຄືບໜ້າພໍສົມຄວນ ຊຶ່ງໄດ້ສຳເລັດການລົງເກັບກຳຂໍ້ມູນຂອງ 17 ບໍລິສັດ ລວມທັງພາກລັດ ແລະ ເອກະຊົນ ພ້ອມທັງໄດ້ສັງລວມຂໍ້ມູນ ແລະ ປະເມີນຄວາມພ້ອມຂອງບໍລິສັດເຫຼົ່ານັ້ນໃນເບື້ອງຕົ້ນ ໂດຍລວມແລ້ວເຫັນວ່າ ມີບໍລິສັດຈຳນວນໜຶ່ງແມ່ນມີເງື່ອນໄຂ ສາມາດສະເໜີອອກຈຳໜ່າຍຫຼັກຊັບໄດ້, ຖ້າບໍລິສັດມີການອອກຈຳໜ່າຍຫຼັກຊັບ ແລະ ຈົດທະບຽນໃນ ຕລຊລ ກໍ່ຈະສາມາດປັບປຸງຕົນເອງໃຫ້ມີຄວາມເຂັ້ມແຂງ, ມີການດຳເນີນງານທີ່ມີປະສິດທິພາບ ແລະ ປະສິດທິຜົນຫຼາຍຂຶ້ນ ຊຶ່ງສອດຄ່ອງກັບທິດທາງລວມຂອງລັດຖະບານ ທີ່ໄດ້ກຳນົດໄວ້ໃນດຳລັດວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ປະຈຳປີ 2017.

### 3. ການຄຸ້ມຄອງການເຄື່ອນໄຫວໃນຕະຫຼາດຂັ້ນສອງ

ໃນປີ 2017 ແມ່ນສຸມໃສ່ການຈັດຕັ້ງປະຕິບັດວຽກງານສ້າງສະພາບຄ່ອງໃຫ້ແກ່ຕະຫຼາດຫຼັກຊັບ ເປັນຕົ້ນຕໍ ດ້ວຍການຄົ້ນຄວ້າປັບປຸງກົນໄກການຊື້-ຂາຍຮຸ້ນໃນຕະຫຼາດຂັ້ນສອງ ກໍຄືການປັບປຸງດ້ານນະໂຍບາຍ ແລະ ການສ້າງສິ່ງອຳນວຍຄວາມສະດວກຕ່າງໆໃຫ້ແກ່ຜູ້ລົງທຶນ ເປັນຕົ້ນແມ່ນ ການປັບຫຼຸດຄ່າທຳນຽມໃນການຊື້-ຂາຍ ແລະ ໂອນຮຸ້ນ, ການປັບກົນໄກຊື້-ຂາຍຮຸ້ນຢ່າງຕໍ່ເນື່ອງ ແລະ ການຜ່ອນຜັນເງື່ອນໄຂຊື້ຮຸ້ນໃຫ້ແກ່ຜູ້ລົງທຶນປະເພດສະຖາບັນ ໂດຍບໍ່ຈຳເປັນຕ້ອງວາງເງິນມັດຈຳລ່ວງໜ້າ. ການປັບປຸງເຫຼົ່ານັ້ນ ເປັນປັດໄຈສຳຄັນໜຶ່ງ ທີ່ເຮັດສ້າງຄວາມສົນໃຈຈາກຜູ້ລົງທຶນ ໂດຍສະເພາະຜູ້ລົງທຶນພາຍໃນ ທີ່ເຂົ້າມາເປີດບັນຊີຊື້-ຂາຍຫຼັກຊັບເພີ່ມຂຶ້ນ ຈາກ 12.418 ບັນຊີໃນປີ 2016 ມາເປັນ 13.088 ບັນຊີ. ໂດຍມີມູນຄ່າຊື້-ຂາຍຮຸ້ນໃນ ຕລຊລ ທຽບກັບປີຜ່ານມາແມ່ນເພີ່ມຂຶ້ນສອງເທົ່າຕົວຈາກ 114 ລ້ານກີບ ມາເປັນ 343.7 ລ້ານກີບ ຊຶ່ງສາເຫດຫຼັກແມ່ນມາຈາກການປ່ຽນຜູ້ຖືຮຸ້ນລາຍໃຫຍ່ຂອງ LWPC (ແຜນວາດ 4) ແລະ ເນື່ອງມາຈາກມີການປ່ຽນແປງມືຂອງຜູ້ຖືຮຸ້ນລາຍໃຫຍ່ຜ່ານຕະຫຼາດ ຈຶ່ງເຮັດໃຫ້ສັດສ່ວນການເຂົ້າມາຊື້-ຂາຍຮຸ້ນຂອງນັກລົງທຶນພາຍໃນ ກວມອັດຕາສ່ວນເພີ່ມຂຶ້ນທຽບກັບປີຜ່ານມາ ໂດຍໃນປີນີ້ແມ່ນກວມເອົາ 49.7% ຂອງມູນຄ່າການຊື້-ຂາຍທັງໝົດ (ແຜນວາດ 5). ເຖິງຢ່າງໃດກໍ່ຕາມ, ເນື່ອງຈາກຜົນການດຳເນີນງານໃນປີຜ່ານມາຂອງບໍລິສັດຈົດທະບຽນຈຳນວນໜຶ່ງ ບໍ່ທັນພົ້ນເດັ່ນເທົ່າທີ່ຄວນ ຈຶ່ງເຮັດໃຫ້ລາຄາຮຸ້ນຫຼຸດລົງ ສົ່ງຜົນໃຫ້ດັດຊະນີຕະຫຼາດຫຼັກຊັບລາວຫຼຸດລົງ. (ປີ 2017 ດັດຊະນີຕະຫຼາດຫຼັກຊັບ ປິດທີ່ 998,39 ຈຸດ ຫຼຸດລົງ 16,16 ຈຸດ).

**ແຜນວາດ 3: ສະພາບການຊື້-ຂາຍຮຸ້ນຂອງ ຕລຊລ (LSX)**

(ແຕ່ວັນທີ 01 ມັງກອນ ຫາ ວັນທີ 26 ທັນວາ 2017)




| | BCEL | EDL-GEN | LWPC | PTL | SVN | PCD |
|---|---|---|---|---|---|---|
| ປີ 2016 ລາຄາປິດ | 4,497 | 5,278 | 5,747 | 2,719 | 3,315 | - |
| ປີ 2017 ລາຄາປິດ | 5,330 | 5,080 | 7,404 | 2,192 | 3,006 | 1,402 |
| % ປ່ຽນແປງ | 18.52% | -3.76% | 28.83% | -19.37% | -9.34% | 0 |

ໝາຍເຫດ: PCD ຈົດທະບຽນໃນປີ 2017

ແຜນວາດ 4: ມູນຄ່າ ແລະ ປະລິມານການຊື້-ຂາຍ




ແຜນວາດ 5: ອັດຕາສ່ວນການຊື້-ຂາຍ ໂດຍນັກລົງທຶນຕ່າງປະເທດ ແລະ ພາຍໃນ ນັບແຕ່ມື້ສ້າງຕັ້ງຈົນຮອດປີ 2017




## 4. ການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ

ການສ້າງ ແລະ ພັດທະນາສະຖາບັນສື່ກາງດ້ານຫຼັກຊັບ ໃນປີນີ້ ຖືວ່າມີການຂະຫຍາຍຕົວພໍສົມຄວນ ໂດຍສະເພາະແມ່ນປະເພດການໃຫ້ບໍລິການ ເພື່ອເປັນການຊຸກຍູ້ໃຫ້ຜູ້ລົງທຶນເຂົ້າມາຊື້-ຂາຍໃນຕະຫຼາດຫຼັກຊັບລາວໃຫ້ຫຼາຍຂຶ້ນ ກໍ່ຄືການເພີ່ມສະພາບຄ່ອງໃຫ້ແກ່ຕະຫຼາດຫຼັກຊັບ, ພ້ອມທັງ ໄດ້ຄົ້ນຄວ້າພິຈາລະນາຮັບຮອງເອົາການສ້າງຕັ້ງບໍລິສັດປະເມີນຊັບສິນ ຢູ່ ສປປ ລາວ ຈຳນວນ 2 ແຫ່ງ. ສຄຄຊ ຍັງໄດ້ເລີ່ມຄົ້ນຄວ້າກົນໄກກ່ຽວກັບບໍລິສັດບໍລິຫານກອງທຶນ ເພື່ອປູພື້ນຖານໃຫ້ແກ່ການສ້າງນິຕິກຳທີ່ກ່ຽວຂ້ອງ ໃນຕໍ່ໜ້າ.

ໃນປີ 2017, ສຄຄຊ ໄດ້ອະນຸຍາດໃຫ້ຜູ້ທີ່ຈົບຫຼັກສູດຈາກຕ່າງປະເທດ ສາມາດມາຍື່ນຂໍໃບອະນຸຍາດເປັນນັກວິຊາຊີບທຸລະກິດຫຼັກຊັບ ຢູ່ ສປປ ລາວ ໄດ້ ເພື່ອເປີດໂອກາດໃຫ້ແກ່ການກໍ່ສ້າງນັກວິຊາຊີບທຸລະກິດຫຼັກຊັບໃຫ້ຫຼາກຫຼາຍຂຶ້ນ.

## 5. ການໂຄສະນາເຜີຍແຜ່

ເພື່ອເຮັດໃຫ້ມວນຊົນມີຄວາມຮັບຮູ້ ເຂົ້າໃຈ ກ່ຽວກັບຕະຫຼາດທຶນ ແລະ ກົນໄກການລົງທຶນໃນຕະຫຼາດທຶນ ເພື່ອໃຫ້ມີສ່ວນຮ່ວມໃນການພັດທະນາຕະຫຼາດທຶນ, ສຄຄຊ ໄດ້ສືບຕໍ່ເອົາໃຈໃສ່ເຄື່ອນໄຫວວຽກງານໂຄສະນາເຜີຍແຜ່ຄວາມຮູ້ກ່ຽວກັບວຽກງານຕະຫຼາດທຶນຢ່າງຕັ້ງໜ້າ. ໃນປີ 2017 ສຄຄຊ ໄດ້ລົງເຜີຍແຜ່ກັບທີ່ ທັງໝົດ 21 ຄັ້ງ ຊຶ່ງເຫັນວ່າ ມີລັກສະນະກວ້າງຂວາງຂຶ້ນເມື່ອທຽບໃສ່ປີ 2016. ພ້ອມນັ້ນ, ກໍ່ໄດ້ມີການໂຄສະນາເຜີຍແຜ່ຜ່ານທາງໂທລະພາບ ແລະເຜີຍແຜ່ລົງໃນວາລະສານການທະນາຄານ, ໜັງສືພິມລາວພັດທະນາ, ເວັບໄຊ໌ ແລະ ຄື້ນວິທະຍຸ 99,7 MHz ຂອງ ທຫລ ຢ່າງເປັນປົກກະຕິ. ນອກນັ້ນ, ຍັງໄດ້ໃຊ້ການໂຄສະນາຜ່ານສື່ສັງຄົມອອນໄລ ເນື່ອງຈາກເຫັນວ່າປະຊາຊົນລາວຈຳນວນຫຼາຍ ສາມາດເຂົ້າເຖິງອິນເຕີເນັດ ແລະ ນິຍົມໃຊ້ສື່ສັງຄົມອອນໄລຕ່າງໆຢ່າງກວ້າງຂວາງ ເຊັ່ນ: Facebook, Youtube ແລະ ອື່ນໆ.

ຜ່ານການເອົາໃຈໃສ່ຢ່າງຈິງຈັງໃນການຈັດຕັ້ງປະຕິບັດການໂຄສະນາເຜີຍແຜ່ວຽກງານຕະຫຼາດທຶນຄືດັ່ງກ່າວ ໄດ້ເຮັດໃຫ້ວຽກງານຕະຫຼາດທຶນເປັນທີ່ຮັບຮູ້ຂອງມວນຊົນ ແລະ ມີການປະກອບສ່ວນໃນວຽກງານຕະຫຼາດທຶນຫຼາຍຂຶ້ນເລື້ອຍໆເວົ້າລວມ, ເວົ້າສະເພາະກໍ່ແມ່ນ ການມີສ່ວນຮ່ວມໃນການລົງທຶນໃນ ຕລຊລ ນັບມື້ນັບຫຼາຍຂຶ້ນ.

**ຮູບພາບທີ 1: ການເຜີຍແຜ່ວຽກງານຫຼັກຊັບໃຫ້ແກ່ຜູ້ມີສ່ວນຮ່ວມໃນວຽກງານຕະຫຼາດທຶນ**




## 6. ການພົວພັນຮ່ວມມືສາກົນ

ການພົວພັນຮ່ວມມືກັບພາກພື້ນ ແລະ ສາກົນ ທັງໃນລະດັບສອງຝ່າຍ ແລະ ຫຼາຍຝ່າຍ ດ້ວຍການແລກປ່ຽນຂໍ້ມູນຂ່າວສານ, ການຖອດບົດຮຽນເຊິ່ງກັນແລະກັນ ແລະ ການໃຫ້ການຊ່ວຍເຫຼືອທາງດ້ານທຶນຮອນ, ມີບົດບາດສຳຄັນໃນການຊ່ວຍ ສຄຄຊ ພັດທະນາບຸກຄະລາກອນ ລວມທັງ ການປັບປຸງ ແລະ ສ້າງບັນດານິຕິກຳຕ່າງໆຕິດພັນກັບການຄຸ້ມຄອງ ແລະ ພັດທະນາຕະຫຼາດທຶນຂອງ ສປປ ລາວ ໂດຍສະເພາະໃນໄລຍະເລີ່ມຕົ້ນການພັດທະນາ. ປີ 2017 ເປັນອີກປີໜຶ່ງທີ່ມີຄວາມທ້າທາຍ ໃນການກະກຽມຄວາມພ້ອມໃນການເຊື່ອມໂຍງຕະຫຼາດທຶນລາວກັບຕະຫຼາດທຶນໃນພາກພື້ນ ແລະ ສາກົນໃນຂອບຕ່າງໆ ເປັນຕົ້ນແມ່ນ ຂອບ 5 ປະເທດລຸ່ມອ່າງແມ່ນໍ້າຂອງ, ຂອບອາຊຽນ ແລະ ອາຊຽນ+3, ຂອບ WTO ແລະ IOSCO ຊຶ່ງການຄົ້ນຄວ້າບັນດາເງື່ອນໄຂໃນການສະໝັກເຂົ້າເປັນສະມາຊິກຂອງອົງການ IOSCO ເຫັນວ່າ ມີຄວາມຄືບໜ້າພໍສົມຄວນ ໂດຍສະເພາະ ແມ່ນການກະກຽມຊຸດເອກະສານສະໝັກເຂົ້າເປັນສະມາຊິກສຳຮອງ. ສຄຄຊ ໄດ້ຍົກສູງພາລະບົດບາດຂອງຕົນໃນເວທີສາກົນ ດ້ວຍການເປັນເຈົ້າພາບຈັດກອງປະຊຸມ ຄະນະກຳມະການພັດທະນາຕະຫຼາດທຶນອາຊຽນ ຢູ່ນະຄອນຫຼວງວຽງຈັນ ແລະ ໄດ້ສືບຕໍ່ເປັນປະທານຮ່ວມໃນກອງປະຊຸມຄະນະກຳມະການພັດທະນາຕະຫຼາດທຶນອາຊຽນ ຈົນຮອດເດືອນ ມິຖຸນາ 2018. ນອກຈາກນີ້, ກໍ່ໄດ້ສືບຕໍ່ເຂົ້າຮ່ວມກອງປະຊຸມໃນກອບການຮ່ວມມືອາຊຽນໃນການພັດທະນາຕະຫຼາດທຶນຢ່າງເປັນປົກກະຕິ ເປັນຕົ້ນແມ່ນ ກອງປະຊຸມ ACMF, ACMC Deputies ແລະ ABMF.

**ຮູບພາບທີ 2: ກອງປະຊຸມ (Working Committee – Capital Market Development) WC-CMD ທີ່ ນະຄອນຫຼວງວຽງຈັນ**



## *II. ທິດທາງແຜນການ ປີ 2018*

ເພື່ອຮັບປະກັນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຫຼັກຊັບ ແລະ ພັດທະນາຕະຫຼາດທຶນ ສາມາດບັນລຸຕາມເປົ້າໝາຍ ສຄຄຊ ຈະສຸມໃສ່ປະຕິບັດບັນດາໜ້າວຽກ ສຳລັບປີ 2018 ດັ່ງລາຍລະອຽດລຸ່ມນີ້:

**ດ້ານນິຕິກຳ**: ຈະສືບຕໍ່ຄົ້ນຄວ້າປັບປຸງກົດໝາຍວ່າດ້ວຍຫຼັກຊັບ ພ້ອມທັງຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍວ່າດ້ວຍຫຼັກຊັບ ຈຳນວນ 9 ສະບັບ ເພື່ອຮອງຮັບການຄຸ້ມຄອງວຽກງານຫຼັກຊັບ ທີ່ມີການພັດທະນາ ແລະ ມີຄວາມຫຼາກຫຼາຍຍິ່ງຂຶ້ນ ໃຫ້ມີລັກສະນະຄົບຖ້ວນ, ຮັດກຸມ ແລະ ສອດຄ່ອງກັບສະພາບການພັດທະນາຕະຫຼາດທຶນ ແລະ ມາດຖານສາກົນ.

**ການອອກຈຳໜ່າຍຫຼັກຊັບ ແລະ ການຄຸ້ມຄອງ**: ສຸມໃສ່ການຄົ້ນຄວ້າພິຈາລະນາອະນຸມັດການອອກຈຳໜ່າຍຫຼັກຊັບຂອງບໍລິສັດໃຫ້ສາມາດອອກຈຳໜ່າຍ ແລະ ຈົດທະບຽນໃນ ຕລຊລ ຈຳນວນ 3-4 ບໍລິສັດ; ສົມທົບກັບພາກສ່ວນກ່ຽວຂ້ອງລົງເກັບກຳຂໍ້ມູນ ແລະ ສ້າງບັນຊີລາຍຊື່ບໍລິສັດເປົ້າໝາຍຈົດທະບຽນໃນ ຕລຊລ. ຄຽງຄູ່ກັນນັ້ນ, ສຄຄຊ ຈະສືບຕໍ່ຄົ້ນຄວ້າສ້າງບົດແນະນຳ ແລະ ລະບຽບການກ່ຽວກັບການຄຸ້ມຄອງບໍລິຫານ (Corporate Governance) ໃຫ້ສາມາດສ້າງໄດ້ຫຼັກການຄຸ້ມຄອງບໍລິຫານ (CG Code) ເພື່ອເປັນບົດແນະນຳ ແລະ ເປັນບ່ອນອີງໃນການບໍລິຫານຂອງບັນດາບໍລິສັດຈົດທະບຽນ ແລະ ເປົ້າໝາຍບໍລິສັດຈົດທະບຽນໃນ ຕລຊລ ໃຫ້ສອດຄ່ອງກັບການບໍລິຫານທີ່ດີ.

**ການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ**: ສືບຕໍ່ຊຸກຍູ້ສົ່ງເສີມໃຫ້ມີບໍລິສັດບໍລິຫານຊັບສິນ ເພື່ອຮອງຮັບການສ້າງຕັ້ງກອງທຶນ ແນ່ໃສ່ເພີ່ມຜະລິດຕະພັນຊື້-ຂາຍຢູ່ ຕລຊລ ໃຫ້ຫລາຍກວ່າເກົ່າ. ພ້ອມທັງຊຸກຍູ້ໃຫ້ມີການບໍລິການຜູ້ລົງທຶນໃນການຫຼຸດອັດຕາການວາງເງິນມັດຈຳລ່ວງໜ້າ ແລະ ການໃຊ້ຫຼັກຊັບມັດຈຳລ່ວງໜ້າແທນເງິນ ເພື່ອໃຫ້ຜູ້ລົງທຶນມີເງື່ອນໄຂເຂົ້າມາລົງທຶນໃນ ຕລຊລ ເພີ່ມຂຶ້ນ ແລະ ຊຸກຍູ້ບັນດາບໍລິສັດຫຼັກຊັບ ສາມາດແກ້ໄຂຂໍ້ຄົງຄ້າງທີ່ເປັນອຸປະສັກໃນການເຄື່ອນໄຫວທຸລະກິດຂອງຕົນ. ພ້ອມນີ້, ກໍ່ຈະເອົາໃຈໃສ່ຕິດຕາມການເຄື່ອນໄຫວຂອງສະຖາບັນສື່ກາງດ້ານຫຼັກຊັບຢ່າງໃກ້ຊິດ ທັງກວດກາດ້ານເອກະສານ ແລະ ກວດກາກັບທີ່.

**ການຄຸ້ມຄອງການເຄື່ອນໄຫວໃນຕະຫຼາດຂັ້ນສອງ**: ສືບຕໍ່ຕິດຕາມການເຄື່ອນໄຫວຂອງ ຕລຊລ ຢ່າງໃກ້ຊິດ ພ້ອມທັງສົມທົບກັບ ຕລຊລ ຄົ້ນຄວ້າ ແລະ ປັບປຸງ ບັນດາລະບຽບການ ແລະ ກົນໄກຕ່າງໆຂອງຕະຫຼາດທີ່ເຫັນວ່າບໍ່ຄ່ອງຕົວເພື່ອອຳນວຍຄວາມສະດວກໃນການຊື້-ຂາຍຮຸ້ນຢູ່ ຕລຊລ ແລະ ສ້າງຄວາມເຂັ້ມແຂງ ແລະ ແກ້ໄຂສະພາບຄ່ອງ ໃຫ້ແກ່ ຕລຊລ ໃນເວລາດຽວກັນກໍ່ສົ່ງເສີມການລົງທຶນ ຂອງຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ, ພ້ອມທັງ ຈັດຕັ້ງປະຕິບັດແຜນງານ-ໂຄງການຮ່ວມມືກັບຕະຫຼາດຫຼັກຊັບ ສ.ເກົາຫຼີ ໃນການສ້າງຄວາມເຂັ້ມແຂງໃຫ້ແກ່ຕະຫຼາດທຶນລາວ ແລະ ຄົ້ນຄວ້າບັນດາຜະລິດຕະພັນຫຼັກຊັບ ເຊັ່ນ: ຮຸ້ນກູ້ແປສະພາບ, ຮຸ້ນບຸລິມະສິດ, ກອງທຶນໂຄງລ່າງພື້ນຖານ ແລະ ການເປີດການຊື້-ຂາຍ ພັນທະບັດລັດຖະບານ ຢູ່ ຕລຊລ.

**ການໂຄສະນາເຜີຍແຜ່**: ເພື່ອເຮັດໃຫ້ມວນຊົນ ທັງພາຍໃນ ແລະ ຕ່າງປະເທດ ມີຄວາມຮັບຮູ້ ແລະ ເຂົ້າໃຈຕໍ່ວຽກງານຕະຫຼາດທຶນລາວ ນັບມື້ນັບຫຼາຍຂຶ້ນ, ສຄຄຊ ຈະສືບຕໍ່ເພີ່ມທະວີການໂຄສະນາເຜີຍແຜ່ວຽກງານຕະຫຼາດທຶນດ້ວຍຫຼາຍຮູບການ ແລະ ຫຼາຍຊ່ອງທາງ ສູ່ສັງຄົມຢ່າງກວ້າງຂວາງ ແລະ ທົ່ວເຖິງ, ພ້ອມທັງ ສືບຕໍ່ສ້າງລາຍການໂທລະພາບ "ເສັ້ນທາງສູ່ຕະຫຼາດທຶນລາວ" ໃຫ້ເປັນຊ່ອງທາງທີ່ມີປະສິດທິພາບໃນການເຜີຍແຜ່. ພ້ອມດຽວກັນນີ້, ກໍ່ຈະສຸມໃສ່ຄົ້ນຄວ້າເງື່ອນໄຂຄວາມເປັນໄປໄດ້ໃນການສ້າງຕັ້ງ "ສູນໃຫ້ຄວາມຮູ້ວຽກງານຕະຫຼາດທຶນ" ເພື່ອເປັນອີກຊ່ອງທາງໜຶ່ງໃນການເຜີຍແຜ່ຄວາມຮູ້ວຽກງານຕະຫຼາດທຶນ ແລະ ທັງເປັນບ່ອນສ້າງບຸກຄະລາກອນໃຫ້ແກ່ຂະແໜງການຕະຫຼາດທຶນໃນອານາຄົດ.

**ການພົວພັນຮ່ວມມືສາກົນ:** ເພື່ອເປີດກວ້າງການພົວພັນ ແລະ ຮ່ວມມືດ້ານຕະຫຼາດທຶນພາກພື້ນ ແລະ ສາກົນ ແນ່ໃສ່ການພັດທະນາບຸກຄະລາກອນໃນວຽກງານຫຼັກຊັບ ແລະ ໃຫ້ວຽກງານຫຼັກຊັບ ສປປ ລາວ ສາມາດພັດທະນາເຊື່ອມໂຍງກັບສາກົນ, ສຄຄຊ ຈະສຸມໃສ່ສືບຕໍ່ ແລະ ຄົ້ນຄວ້າການຮ່ວມມືກັບສາກົນ ແລະ ຍາດແຍ່ງການຊ່ວຍເຫຼືອ ທັງຈາກສອງຝ່າຍ, ຫຼາຍຝ່າຍ ແລະ ອົງການຈັດຕັ້ງສາກົນໃໝ່ ແລະ ທີ່ໄດ້ຮ່ວມມືກັນຢູ່ແລ້ວ ເພື່ອກໍ່ສ້າງບຸກຄະລາກອນ ທັງຢູ່ພາຍໃນ ແລະ ຕ່າງປະເທດ, ພ້ອມດຽວກັນນີ້ ກໍ່ຈະສູ້ຊົນໃຫ້ສາມາດເຂົ້າເປັນສະມາຊິກສຳຮອງອົງການຄຸ້ມຄອງວຽກງານຫຼັກຊັບສາກົນ (IOSCO) ໄດ້ພາຍໃນປີ 2018, ແລະ ສືບຕໍ່ການຮ່ວມມືໃນການພັດທະນາຕະຫຼາດທຶນໃນພາກພື້ນ ໃຫ້ມີຄວາມເຂັ້ມແຂງຂຶ້ນເທື່ອລະກ້າວ.

# ຂໍ້ມູນຕິດຕໍ່




***ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ)***

ບ້ານເພຍວັດ, ໜ່ວຍ 6, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ.

PO. Box: 19

Phone: (856-21) 217770

Fax: (856-21) 217806

Email: lsco@lsc.gov.la.

Website: www.lsc.gov.la

ໂທລະສັບສາຍດ່ວນ: 1602


**Facebook:**

- ເຂົ້າໄປທີ່ https://www.facebook.com ແລ້ວຄົ້ນຫາຄຳວ່າ: "ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ".

**Youtube:**

- ເຂົ້າໄປທີ່ https://www.youtube.com ແລ້ວຄົ້ນຫາຄຳວ່າ: "ລາຍການ ເສັ້ນທາງສູ່ຕະຫຼາດທຶນລາວ".


| | |
|---|---|
| ຊີ້ນຳລວມໂດຍ: | ທ່ານ ນ. ສາຍສະໝອນ ຈັນທະຈັກ ຫົວໜ້າສຳນັກງານ ຄຄຊ |
| ຮຽບຮຽງ ແລະ ກວດແກ້ໂດຍ: | ທ່ານ ນ. ນະຄອນສີ ມະໂນທັມ ຮອງຫົວໜ້າ ສຄຄຊ |
| | ທ່ານ ນ. ວຽງວັນລີ ເລືອງວັນໄຊ ຫົວໜ້າພະແນກຈັດຕັ້ງ ແລະບໍລິຫານ, ສຄຄຊ |
| ຂຽນໂດຍ: | ທ່ານ ນ. ສຸດສະດາ ຕົ່ນທອງໃສ ວິຊາການ ພະແນກຈັດຕັ້ງ ແລະບໍລິຫານ, ສຄຄຊ |
| ອອກແບບໂດຍ: | ທ່ານ ວິລະວົງ ວົງມະຈັນ ວິຊາການໄອທີ ພະແນກຈັດຕັ້ງ ແລະບໍລິຫານ, ສຄຄຊ |
| ຈັດພິມ: | 5 ເຫຼັ້ມ |